ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ຫ້ອງການ

ເລກທີ: 01643 /ຍທຂ.ຫກ
ນະຄອນຫຼວງວຽງຈັນ, ວັນທີ: 23 JAN 2020

# ແຈ້ງການ

ເຖິງ: ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ແລະ ນະຄອນຫຼວງ

ເລື່ອງ: ການຈັດຕັ້ງປະຕິບັດການອອກອະນຸຍາດທາງດ້ານເຕັກນິກນຳເຂົ້າຍານພາຫະນະເພື່ອຂຶ້ນທະບຽນ ໃນ ສປປ ລາວ ໂດຍຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ LNSW ແລະ ການປະກອບເອກະສານ ເພື່ອຂໍອະນຸຍາດຂຶ້ນທະບຽນ

- ອີງຕາມແຈ້ງການຂອງຫ້ອງການກະຊວງ ໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 21666/ຫກ.ສລ, ລົງວັນທີ 6 ຕຸລາ 2016
- ອີງຕາມບົດແນະນຳກ່ຽວກັບການນຳໃຊ້ການກວດກາດ້ານເອກະສານເຕັກນິກນຳເຂົ້າຍານພາຫະນະ ໂດຍຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ ສະບັບເລກທີ 06491/ຍທຂ.ກຂສ, ລົງວັນທີ 28 ມີນາ 2019.
- ອີງຕາມໜັງສືຂອງກົມຂົນສົ່ງສະບັບເລກທີ 00634/ຍທຂ.ກຂສ, ລົງວັນທີ 10 ມັງກອນ 2020 ແລະ ການເຫັນດີຂອງທ່ານ ວຽງສະຫວັດ ສີພັນດອນ ຮອງລັດຖະມົນຕີກະຊວງ ໂຍທາທິການ ແລະ ຂົນສົ່ງ ຄັ້ງວັນທີ 17 ມັງກອນ 2020.
- ອີງຕາມການສະເໜີຂອງກົມຂົນສົ່ງຄັ້ງວັນທີ 22 ມັງກອນ 2020.

ຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດ ແຈ້ງມາຍັງທ່ານຊາບວ່າ: ນັບຕັ້ງແຕ່ວັນທີ 27 ມັງກອນ 2020 ເປັນຕົ້ນໄປ ກົມຂົນສົ່ງ ຈະໄດ້ອອກອະນຸຍາດທາງດ້ານເຕັກນິກນຳເຂົ້າຍານພາຫະນະ ເພື່ອຂຶ້ນທະບຽນ ໃນ ສປປ ລາວ ໂດຍຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ Lao National Single Window “LNSW”. ຊຶ່ງໃນໄລຍະທຳອິດ ແມ່ນຈະໄດ້ຈັດຕັ້ງປະຕິບັດ ຢູ່ ດ່ານຂົວມິດຕະພາບ 1 ນະຄອນຫຼວງວຽງຈັນ ແລະ ໃນຕໍ່ໜ້າຈະຂະຫຍາຍໄປທຸກດ່ານ ສາກົນໃນຂອບເຂດທົ່ວປະເທດ. ການນຳໃຊ້ແບບຟອມ ໃບອະນຸຍາດທາງດ້ານເຕັກນິກ ໃນລະບົບ LNSW ໃບໜຶ່ງ ຈະປະກອບມີ 20 ຄັນ/ໃບ (ສະເພາະລົດຍີ່ຫໍ້, ປະເພດ ແລະ ລຸ້ນດຽວກັນ) ທີ່ປ່ຽນແທນຟອມໂຕເກົ່າ ທີ່ ອອກອະນຸຍາດເປັນຄັນ . ເພື່ອເຮັດໃຫ້ການຂຶ້ນທະບຽນໃນລະບົບໃໝ່ (LNSW) ເປັນເອກະພາບໃນຂອບເຂດທົ່ວປະເທດ, ຂັ້ນຕອນການອະນຸຍາດຂຶ້ນທະບຽນໃຫ້ປະຕິບັດດັ່ງນີ້:

1. ຜູ້ໄປຂຶ້ນທະບຽນຕ້ອງແຈ້ງເລກລະຫັດໃບກຳກັບການຂົນສົ່ງສິນຄ້າ Summary Declaration Reference “SD” ຕໍ່ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ເພື່ອກວດກາຄວາມຖືກຕ້ອງ ເອກະສານ ການນຳເຂົ້າຍານພາຫະນະ;
2. ເອກະສານຂຶ້ນທະບຽນປະກອບມີ:
    1) ໃບຊື້-ຂາຍຍານພາຫະນະ ລະຫວ່າງ ບໍລິສັດທີ່ເປັນຕົວແທນຈຳໜ່າຍຍານພາຫະນະ ແລະ ຜູ້ຊື້ (**ສະບັບຕົ້ນ**);
    2) ສຳມະໂນຄົວ ຫຼື ບັດປະຈຳຕົວ ຂອງເຈົ້າຂອງລົດຜູ້ທີ່ຈະຂຶ້ນທະບຽນ (**ສະບັບສຳເນົາ**);
    3) ໃບແຈ້ງສິນຄ້າເປັນລາຍລະອຽດ ບ 40 ສະບັບຕົ້ນ ຫຼື ສຳເນົາ, ໃບຢັ້ງຢືນການເສຍພາສີ ບ 9 ຕົ້ນສະບັບເປັນແຕ່ລະຄັນ ຈາກກົມພາສີ ກະຊວງການເງິນ;

4) ເອກະສານ ໃບອະນຸຍາດນຳເຂົ້າ ຈາກ ກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ໃບອະນຸຍາດທາງດ້ານເຕັກນິກນຳເຂົ້າຍານພາຫະນະ ເພື່ອຂຶ້ນທະບຽນ ໃນ ສປປ ລາວ ຈາກ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຂໍ້ມູນທາງດ້ານເຕັກນິກ ອື່ນໆ ແມ່ນສາມາດກວດກາໄດ້ຢູ່ໃນລະບົບ LNSW.

3. ມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຊີ້ນຳ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ຂອງຕົນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບເພື່ອປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ**

ບຸນຈັນ ສິນທະວົງ